ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0091/ກຈພ

ນະຄອນຫຼວງວຽງຈັນ, ວັນທີ 15/01/2024

**ສະໂໜດນຳສົ່ງ**

**ຮຽນ:** ທ່ານ ຫົວໜ້າກົມແຜນການ ແລະ ການເງິນ ທີ່ນັບຖື.

**ເລື່ອງ:** ການສະໜອງເອກະສານແຜນຈັດຊື້-ຈັດຈ້າງ ປະຈຳປີ 2024

- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 9188/ຍທຂ ລົງວັນທີ 25 ເມສາ 2022 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມຈັດຕັ້ງ ແລະ ພະນັກງານ;
- ອີງຕາມ ແຈ້ງການ ຂອງ ກົມແຜນການ ແລະ ການເງິນ, ສະບັບເລກທີ 37868/ກຜງ, ລົງວັນທີ 03 ມັງກອນ 2024.

ກົມຈັດຕັ້ງ ແລະ ພະນັກງານ ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດນຳສົ່ງເອກະສານມາຍັງ ທ່ານ ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ເນື້ອໃນ | ໝາຍເຫດ |
|---|---|---|
| 1 | ຕາຕະລາງສັງລວມແຜນຈັດຊື້-ຈັດຈ້າງ ຂອງກົມຈັດຕັ້ງ ແລະ ພະນັກງານ ປະຈຳປີ 2024; | |
| 2 | ສະຫຼຸບການຈັດຕັ້ງປະຕິບັດສົມທຽບລາຄາການຈັດຊື້-ຈັດຈ້າງ ຂອງກົມຈັດຕັ້ງ ແລະ ພະນັກງານ ປີ 2023 | |

ດັ່ງນັ້ນ, ຈຶ່ງໄດ້ນຳສົ່ງມາຍັງທ່ານຕາມຈິດໃຈຂ້າງເທິງນີ້ດ້ວຍ.

ເຊັນແທນ ຫົວໜ້າກົມ

ຮອງຫົວໜ້າກົມ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມຈັດຕັ້ງ ແລະ ພະນັກງານ

ມຸ້ຍ ສັງວິບຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0090 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 15/01/2024

## ຕາຕະລາງສັງລວມແຜນຈັດຊື້-ຈັດຈ້າງ ຂອງກົມຈັດຕັ້ງ ແລະ ພະນັກງານ ປະຈຳປີ 2024

| ລ/ດ | ລາຍການຈັດຊື້-ຈັດຈ້າງ | ແຫຼ່ງທຶນ | ວິທີການຈັດຊື້-ຈັດຈ້າງ | ວັນທີຄາດຄະເນສະເໜີການຄັດເລືອກ | ວັນທີຄາດຄະເນແຈ້ງໜັງສືເຊີນຮ່ວມປະມູນ | ຄາດໝາຍໄລຍະເວລາຕັດສິນການແຂ່ງຂັນ | ໝາຍເຫດ |
|---|---|---|---|---|---|---|---|
| I | ສິນຄ້າ | | | | | | |
| 1 | ຈັດຊື້ເຄື່ອງໃຊ້ຫ້ອງການຄັ້ງທີ 1/2024 | ງົບປະມານບໍລິຫານປົກກະຕິ ແລະ ວິຊາການ | ສົມທຽບລາຄາ | 5/2/2024 | 12/2/2024 | 29/2/2024 | |
| 2 | ຈັດຊື້ເຄື່ອງໃຊ້ຫ້ອງການຄັ້ງທີ 2/2024 | ງົບປະມານບໍລິຫານປົກກະຕິ ແລະ ວິຊາການ | ສົມທຽບລາຄາ | 6/5/2024 | 13/5/2024 | 31/5/2024 | |
| 3 | ຈັດຊື້ເຄື່ອງໃຊ້ຫ້ອງການຄັ້ງທີ 3/2024 | ງົບປະມານບໍລິຫານປົກກະຕິ ແລະ ວິຊາການ | ສົມທຽບລາຄາ | 30/9/2024 | 7/10/2024 | 25/10/2024 | |
| 4 | ຈັດຊື້ຊັບສົມບັດຄົງທີ | ງົບປະມານບໍລິຫານປົກກະຕິ ແລະ ວິຊາການ | ສົມທຽບລາຄາ | 6/5/2024 | 13/5/2024 | 31/5/2024 | |
| II | ວຽກບໍລິການ | | | | | | |
| 1 | ຈັດຈ້າງສ້ອມແປງພາຫະນະ ຄັ້ງທີ 01/2024 | ງົບປະມານບໍລິຫານປົກກະຕິ ແລະ ວິຊາການ | ສົມທຽບລາຄາ | 1/4/2024 | 10/4/2024 | 26/4/2024 | |
| 2 | ຈັດຈ້າງສ້ອມແປງພາຫະນະ ຄັ້ງທີ 02/2024 | ງົບປະມານບໍລິຫານປົກກະຕິ ແລະ ວິຊາການ | ສົມທຽບລາຄາ | 8/7/2024 | 19/7/2024 | 29/7/2024 | |
| 3 | ຈັດຈ້າງສ້ອມແປງ ແລະ ບໍາລຸງຮັກສາວັດຖຸ, ອຸປະກອນເຄື່ອງຈັກ (ປະເພດເຄື່ອງອັດເອກະສານ) | ງົບປະມານບໍລິຫານປົກກະຕິ ແລະ ວິຊາການ | ສົມທຽບລາຄາ | 3/6/2024 | 10/6/2024 | 24/6/2024 | |
| 4 | ຈັດຈ້າງສ້ອມແປງ ແລະ ບໍາລຸງຮັກສາວັດຖຸ, ອຸປະກອນເຄື່ອງຈັກ (ປະເພດເຄື່ອງໃຊ້ໄຟຟ້າ ແລະ ເຄື່ອງປັບອາກາດ) | ງົບປະມານບໍລິຫານປົກກະຕິ ແລະ ວິຊາການ | ສົມທຽບລາຄາ | 9/9/2024 | 16/9/2024 | 30/9/2024 | |

ເຊັນແທນ ຫົວໜ້າກົມ
ຮອງຫົວໜ້າກົມ

ນຸ້ຍ ສັງວິບຸດ

ຫົວໜ້າພະແນກ
ຈັດຕັ້ງ-ບໍລິຫານ ແລະ ແຮງງານເງິນເດືອນ

ນ. ຄຳພອນ ທິບພະວົງ

ຜູ້ສັງລວມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0049 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 15/01/2024

## ສະຫຼຸບການຈັດຕັ້ງປະຕິບັດສົມທຽບລາຄາການຈັດຊື້-ຈັດຈ້າງ ຂອງກົມຈັດຕັ້ງ ແລະ ພະນັກງານ ປີ 2023

| ລ/ດ | ລາຍການຈັດຊື້-ຈັດຈ້າງ | ແຜນເບື້ອງຕົ້ນ | ຕົວເລກໄດ້ຮັບອະນຸມັດ | ມູນຄ່າສັນຍາ | ແຫຼ່ງທຶນ | ຮູບແບບການຈັດຊື້-ຈັດຈ້າງ | ຂໍ້ຕົກລົງຮັບຮອງ | | ໝາຍເຫດ |
|---|---|---|---|---|---|---|---|---|---|
| | | ກີບ | ກີບ | ກີບ | | | ເລກທີ | ລົງວັນທີ | |
| | ລວມທັງໝົດ: | 315.618.000 | 315.168.600 | 314.986.120 | | | | | |
| I. ຫ້ອງການ/ກົມ/ກອງ/ສະຖາບັນ | | 315.618.000 | 315.168.600 | 314.986.120 | | | | | |
| 1.ງົບປະມານປົກກະຕິ ແລະ ວິຊາການ | | | | | | | | | |
| 1.1. ສະໜອງສິນຄ້າ ແລະ ການບໍລິການ | | | | | | | | | |
| 1 | ຈັດຊື້ເຄື່ອງໃຊ້ຫ້ອງການ | 130.000.000 | 130.000.000 | 49.760.000 | ລັດ | ສົມທຽບລາຄາ | 672/ກຈພ | 22/5/2023 | |
| 2 | | | | 40.200.000 | ລັດ | ສົມທຽບລາຄາ | 1678/ກຈພ | 31/11/2023 | |
| 3 | | | | 39.890.000 | ລັດ | ສົມທຽບລາຄາ | 1746/ກຈພ | 1/12/2023 | |
| 4 | ສ້ອມແປງວັດຖຸ, ອຸປະກອນ | 80.000.000 | 80.000.000 | 19.581.000 | ລັດ | ສົມທຽບລາຄາ | 471/ກຈພ | 9/5/2023 | |
| 5 | | | | 42.999.020 | ລັດ | ສົມທຽບລາຄາ | 1516/ກຈພ | 7/11/2023 | |
| 6 | | | | 17.387.500 | ລັດ | ສົມທຽບລາຄາ | 1596/ກຈພ | 8/11/2023 | |
| 7 | ສ້ອມແປງພາຫະນະ | 65.618.000 | 65.600.000 | 38.000.000 | ລັດ | ສົມທຽບລາຄາ | 1026/ກຈພ | 8/8/2023 | |
| 8 | | | | 27.600.000 | ລັດ | ສົມທຽບລາຄາ | 1519/ກຈພ | 7/11/2023 | |
| 9 | ຊື້ຊັບສົມບັດຄົງທີ່ | 40.000.000 | 39.568.600 | 39.568.600 | ລັດ | ສົມທຽບລາຄາ | 1563/ກຈພ | 6/11/2023 | |
| ລວມ | | 315.618.000 | 315.168.600 | 314.986.120 | | | | | |

ເຊັນແທນຫົວໜ້າກົມ
ຮອງຫົວໜ້າກົມ

ນຸ້ຍ ສັງວິບຸດ

ຫົວໜ້າພະແນກ
ຈັດຕັ້ງ-ບໍລິຫານ ແລະ ແຮງງານເງິນເດືອນ

ນ. ຄໍາພອນ ທິບພະວົງ

ຜູ້ສັງລວມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຊື່ຂອງຜູ້ຈັດຊື້-ຈັດຈ້າງ: ກະຊວງ/ອົງການ.................. ເລກທີ...00 88

ສົກປີການເງິນ........................... ນະຄອນຫຼວງວຽງຈັນ, ລົງວັນທີ...15.01.2024

## (ແບບຢ່າງ) ຕາຕາລາງສັງລວມ ແຜນການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ປະຈຳປີ

| | *ລາຍການຈັດຊື້-ຈັດຈ້າງ* | *ສົມຍາສະເພາະ* | *ວິທີການຈັດຊື້-ຈັດຈ້າງ* | *ວັນທີຄາດຄະເນສະເໜີຂອງການຄັດເລືອກຄຸນວຸດທິກ່ອນ/ເປີດຮັບການສະແດງຄວາມສົນໃຈ (ເດືອນ/ໄຕມາດ)* | *ວັນທີຄາດຄະເນແຈ້ງໜັງສືເຊີນຮ່ວມປະມູນ/ສະເໜີລາຄາ/ສົ່ງບົດສະເໜີ (ເດືອນ/ໄຕມາດ)* | *ປະເມີນໄລຍະເວລາໃນການສົ່ງມອບ/ຕິດຕັ້ງ/ແຂ່ງຂັນ* |
|---|---|---|---|---|---|---|
| | | ສິນຄ້າ: | | | | |
| 1 | | | | | | |
| | | | | | | |
| | | ວຽກງານກໍ່ສ້າງ: | | | | |
| 1 | | | | | | |
| | | | | | | |
| | | ວຽກງານບໍລິການ: | | | | |
| 1 | | | | | | |
| | | | | | | |
| 2 | | | | | | |
| | | ການຈັດຈ້າງທີ່ປຶກສາ: | | | | |
| 1 | | | | | | |
| | | | | | | |

ຫົວໜ້າ................ ຜູ້ສັງລວມ

ລ. ພູມີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 27292 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 6 ຕຸລາ 2023

# ຂໍ້ຕົກລົງ
## ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ຄຸ້ມຄອງ ແລະ ນຳໃຊ້ເວບໄຊຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ (http://ppmdDmof.gov.la)

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ການສະເໜີຂອງກົມແຜນການ ແລະ ການເງິນ ສະບັບເລກທີ 22500/ກຜງ, ລົງວັນທີ 25 ສິງຫາ 2023.

### ລັດຖະມົນຕີ ຕົກລົງ:

**ມາດຕາ 1** ເຫັນດີແຕ່ງຕັ້ງ ຄະນະຮັບຜິດຊອບ ຄຸ້ມຄອງ ແລະ ນຳໃຊ້ເວບໄຊຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ (http://ppmdDmof.gov.la) ດັ່ງລາຍຊື່ລຸ່ມນີ້:

| | | |
|---|---|---|
| 1. ທ່ານ ຈັນທະສັກ ບົດຕາພານິດ | ຮອງຫົວໜ້າກົມແຜນການ ແລະ ການເງິນ | ຫົວໜ້າຄະນະ |
| 2. ທ່ານ ວິສະລະ ຄຳວົງສາ | ຮອງຫົວໜ້າພະແນກ, ກົມແຜນການ ແລະ ການເງິນ | ຮອງຫົວໜ້າຄະນະ |
| 3. ທ່ານ ສຸກສະຫວັນ ມະຫາໄຊ | ວິຊາການ, ກົມແຜນການ ແລະ ການເງິນ | ຄະນະ |
| 4. ທ່ານ ອານຸທອນ ວໍລະຈິດ | ວິຊາການ, ກົມແຜນການ ແລະ ການເງິນ | ຄະນະ |

**ມາດຕາ 2** ຄະນະທີ່ຖືກແຕ່ງຕັ້ງມີໜ້າທີ່ປະສານກັບຫ້ອງການ, ບັນດາກົມ, ກອງວິຊາການ ແລະ ສະຖາບັນ ທີ່ຂຶ້ນກັບກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອໃຫ້ສົ່ງໜັງສືປະກາດການປະມູນໃຫ້ກົມແຜນການ ແລະ ການເງິນ ເອົາລົງເວບໄຊ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ (ppmd.mof.gov.la) ກ່ອນດຳເນີນການປະມູນຕາມກົດໝາຍ ແລະ ລະບຽບການກຳນົດ, ພາຍຫຼັງສຳເລັດການປະມູນ ແລະ ໄດ້ຮັບຮອງເອົາຜູ້ຊະນະການປະມູນແລ້ວ ຕ້ອງສົ່ງສັນຍາໃຫ້ກົມແຜນການ ແລະ ການເງິນ ເພື່ອເອົາລົງໃນເວບໄຊ.

**ມາດຕາ 3** ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືກັບພວກກ່ຽວໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ສຳເລັດຜົນດ້ວຍດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ ລັດຖະມົນຕີ
ຮອງລັດຖະມົນຕີ

ວີໄລທອງ ໄພສາລາດ

ບ່ອນສົ່ງ:
- ຫ້ອງການກະຊວງ ສະບັບ
- ກົມແຜນການ ແລະ ການເງິນ ສະບັບ
- [illegible] 2ສະບັບ

42/ລຊ
4/1/24

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມແຜນການ ແລະ ການເງິນ

ເລກທີ: 37868 /ກຜງ
ນະຄອນຫຼວງວຽງຈັນ, ວັນທີ: 3 ມັງກອນ 2024

ກົມຈັດຕັ້ງ ແລະ ພະນັກງານ
ຂາເຂົ້າ ເລກທີ 37868
ວັນທີ 4.1.2024

# ແຈ້ງການ

ຮຽນ: ທ່ານ ຫົວໜ້າຫ້ອງການ, ບັນດາກົມ, ສະຖາບັນ ແລະ ກອງວິຊາການ ທີ່ຂຶ້ນກັບກະຊວງ ຍທຂ.
ເລື່ອງ: ການສະໜອງເອກະສານແຜນຈັດຊື້-ຈັດຈ້າງ ປະຈຳປີ 2024.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມແຜນການ ແລະ ການເງິນ, ສະບັບເລກທີ 10789/ຍທຂ, ລົງວັນທີ 05 ພຶດສະພາ 2023;
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຄຳແນະນຳ ການຈັດຕັ້ງປະຕິບັດການຈັດຊື້-ຈັດຈ້າງ ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 26580/ຍທຂ.ກກງ, ລົງວັນທີ 23 ທັນວາ 2021.

ກົມແຜນການ ແລະ ການເງິນ ຂໍຖືເປັນກຽດແຈ້ງການມາຍັງ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ກອງວິຊາການ ທີ່ຂຶ້ນກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອສ້າງແຜນ ແລະ ສະໜອງຂໍ້ມູນກ່ຽວກັບວຽກງານຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ດັ່ງລາຍລະອຽດລຸ່ມນີ້:

1. ສະໜອງເອກະສານແຜນ ຈັດຊື້-ຈັດຈ້າງ ປະຈຳປີ 2024 (ສຳລັບງົບປະມານຂອງລັດ).
2. ສົ່ງໜັງສືປະກາດກ່ອນການປະມູນໃຫ້ກົມແຜນການ ແລະ ການເງິນ ເພື່ອອັບໂຫຼດລົງເວບໄຊ ກະຊວງການເງິນ (ppmd.mof.gov.la) ກ່ອນດຳເນີນການປະມູນທຸກຄັ້ງ ພ້ອມທັງຄັດຕິດແຜນຈັດຊື້-ຈັດຈ້າງປະຈຳປີມາພ້ອມ.
3. ພາຍຫຼັງສຳເລັດການປະມູນ ແລະ ໄດ້ຮັບຮອງເອົາຜູ້ຊະນະການປະມູນແລ້ວ ໃຫ້ສະໜອງແຈ້ງການຜູ້ຊະນະການປະມູນ, ສັນຍາ ໃຫ້ກົມແຜນການ ແລະ ການເງິນ ເພື່ອອັບໂຫຼດລົງເວບໄຊ ກະຊວງການເງິນ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການນີ້ດ້ວຍ.

<u>ໝາຍເຫດ:</u> ສຳລັບຂໍ້ທີ 1 ແມ່ນສົ່ງໃຫ້ກົມແຜນການ ແລະ ການເງິນ ບໍ່ໃຫ້ກາຍວັນທີ 15 ກຸມພາ 2024.

<u>ຕິດຕໍ່ພົວພັນ</u>
ທ້າວ ສຸກສະຫວັນ ມະຫາໄຊ 020 9985 5389.
ທ້າວ ອານຸທອນ ວໍລະຈິດ 020 5994 1188.

ຫົວໜ້າກົມ

ວັນ ດີລະພັນ